# Skills on court enforcement
## ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 1
## General knowledge in implementation of civil judgments in the Lao PDR
## ຄວາມຮູ້ທົ່ວໄປກ່ຽວກັບການປະຕິບັດຄຳຕັດສິນຄະດີແພ່ງ ຢູ່ ສປປ ລາວ

### 1. ຄວາມໝາຍຂອງການປະຕິບັດຄຳຕັດສິນຂອງສານ

"ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼື ຄູ່ຄວາມໃນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກລະເມີດ ຫຼື ສູນເສຍໄປ"[1].

ການປະຕິບັດຄຳຕັດສິນຂອງສານ ແມ່ນມີຄວາມໝາຍສຳຄັນຫຼາຍໃນຂະບວນການຍຸຕິທຳ, ມັນແມ່ນໝາກຜົນຂອງການປະຕິບັດກົດໝາຍໃຫ້ປະກົດຜົນເປັນຈິງ, ເຊິ່ງຕ້ອງໄດ້ອາໃສອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ເປັນອົງການໃນການຮັບຜິດຊອບໃນການປະຕິບັດຄຳຕັດສິນຂອງສານ, ຈັດຕັ້ງ ແລະ ເຄື່ອນໄຫວໃຫ້ໄປຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເວົ້າລວມ, ເວົ້າສະເພາະແມ່ນການປະຕິບັດຄຳຕັດສິນຂອງສານ ເຊິ່ງວຽກງານດັ່ງກ່າວເປັນວຽກງານທີ່ຫຍຸ້ງຍາກ ລະອຽດອ່ອນ ມີຄວາມຈຳເປັນຕ້ອງເຂົ້າໃຈເຖິງວິທີ, ຫຼັກການ ແລະ ຂັ້ນຕອນຢ່າງເລິກເຊິ່ງ ເພື່ອໃຫ້ການນຳເອົາຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນມາປະຕິບັດໃຫ້ປະກົດຜົນເປັນຈິງ.

- "ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ຄຳຕັດສິນ ຫຼື ຄຳພິພາກສາ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ບໍ່ໄດ້ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ; ຄຳຊີ້ຂາດ, ຄຳພິພາກສາຂອງສານປະຊາຊົນສູງສຸດ; ຄຳສັ່ງໃຫ້ປະຕິບັດຜົນການໄກ່ເກ່ຍຂອງສານ; ຄຳຊີ້ຂາດກ່ຽວກັບການປະຕິບັດບົດບັນທຶກການໄກ່ເກ່ຍ ຫຼື ຄຳຕັດສິນຂອງກຳມະການຕັດສິນພາຍໃນ; ຄຳຕັດສິນຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຫຼື ຄຳຕັດສິນຢັ້ງຢືນ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ"[2].

ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ມີຜົນບັງຄັບປະຕິບັດ.

ດັ່ງນັ້ນ, ການປະຕິບັດຄຳຕັດສິນຂອງສານຈຶ່ງມີຄວາມໝາຍດັ່ງນີ້:

---

[1] ມາດຕາ 2 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[2] ມາດຕາ 8 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

- ການປະຕິບັດຄຳຕັດສິນຂອງສານ ເນື້ອແທ້ແມ່ນການປະຕິບັດນະໂຍບາຍຍຸຕິທຳ ຫຼືນະໂຍບາຍ ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍຂອງພັກ ແລະ ລັດເຮົາ. ສະນັ້ນ, "ຜູ້ໃດໄດ້ກະທຳຜິດຜູ້ນັ້ນຕ້ອງຖືກລົງໂທດຢ່າງເຂັ້ມງວດ, ຜູ້ໃດບໍ່ໄດ້ກະທຳຜິດ ແມ່ນເດັດຂາດບໍ່ໄດ້ຖືກລົງໂທດ". ບຸກຄົນ ແລະ ການຈັດຕັ້ງຕ້ອງຢູ່ໃຕ້ລັດຖະທຳມະນູນ ແລະ ກົດໝາຍ; ທຸກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານແລ້ວຈະຕ້ອງໄດ້ເຄົາລົບຢ່າງເຂັ້ມງວດ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ.
- ການປະຕິບັດຄຳຕັດສິນຂອງສານ ແມ່ນການສະແດງອອກເຖິງຄວາມສັກສິດ ແລະ ຄວາມເຂັ້ມແຂງຂອງອຳນາດລັດພວກເຮົາ ທີ່ເປັນອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ. ສະນັ້ນ, ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຕ້ອງມີທັດສະນະອັນຖືກຕ້ອງກັບທາດແທ້ຊົນຊັ້ນຂອງລັດເຮົາ, ຕ້ອງມີຄວາມນົ້ມນອມ, ຄ່ອງແຄ້ວ, ແຕ່ໜັກແໜ້ນ, ເຂັ້ມງວດ ແລະ ເດັດຂາດ ຮູ້ປຸກລະດົມ, ສຶກສາອົບຮົມປະຊາຊົນເຂົ້າຮ່ວມຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ໄດ້ດີ, ເປັນເອກະພາບສູງ, ຮັບປະກັນສິດ ແລະ ຜົນປະໂຫຍດຊອບທຳຂອງລັດ, ລວມໝູ່ ແລະ ພົນລະເມືອງ ຢ່າງແທ້ຈິງ, ຕ້ອງຫຼີກເວັ້ນທ່າທີອ່ຽງຊ້າຍ, ອ່ຽງຂວາ ໃນເວລາຈັດຕັ້ງປະຕິບັດຕົວຈິງ.
- ການປະຕິບັດຄຳຕັດສິນຂອງສານ ແມ່ນການຕໍ່ສູ້ລະຫວ່າງອັນຜິດກົດໝາຍກັບອັນຖືກກົດໝາຍ, ອັນເກົ່າ ກັບອັນໃໝ່, ອັນຊອບທຳ ກັບອັນບໍ່ຊອບທຳ, ອັນແທ້ຈິງ ກັບອັນປອມແປງ, ຖ້າເຮັດບໍ່ດີພວກສັດຕູກໍຈະສວຍໃຊ້ຊ່ອງວ່າງ, ຈຸດອ່ອນໃນການປະຕິບັດກົດໝາຍຂອງພວກເຮົາ ເພື່ອກ່າວໂຈມຕີ ໃສ່ຮ້າຍ ປ້າຍສີ ພັກ, ລັດ ແລະລະບອບໃໝ່ຂອງພວກເຮົາກ່ຽວກັບບັນຫາສິດທິມະນຸດ. ດັ່ງນັ້ນ, ພະນັກງານ ແລະ ເຈົ້າໜ້າທີ່ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງມີທັດສະນະການເມືອງໜັກແໜ້ນ, ມີຫຼັກໝັ້ນມິດ-ສັດຕູ ຈະແຈ້ງ, ມີຄວາມອົດທົນໜຽວແໜ້ນ, ມີຄວາມບໍລິສຸດ ພຸດຜ່ອງ, ມີໄຫວພິບໃນການປະຕິບັດຕົວຈິງ, ທັງກ້າເຮັດ, ກ້າທຳ ແລະ ກ້າຮັບຜິດຊອບຕໍ່ຜົນໄດ້ ຜົນເສຍໃນການຈັດຕັ້ງປະຕິບັດ.

ຍ້ອນແນວນັ້ນ, ການປະຕິບັດຄຳຕັດສິນຂອງສານເປັນວຽກງານໜຶ່ງທີ່ມີຄວາມໝາຍຢ່າງຍິ່ງ ແລະ ຈຳ ເປັນຢ່າງພາວະວິໄສ ໃນຂະບວນການປະຕິບັດກົດໝາຍ, ເພາະວ່າເນື້ອແທ້ຂອງການປະຕິບັດຄຳຕັດສິນຂອງສານ ແມ່ນການນຳເອົາຄຳຕັດສິນ, ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດນັ້ນມາຈັດຕັ້ງປະຕິບັດຢ່າງເປັນຮູບປະທຳໃຫ້ປະກົດຜົນເປັນຈິງເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດຫຼືສູນເສຍໄປ.

## 2. ຄວາມສຳຄັນຂອງການປະຕິບັດຄຳຕັດສິນຂອງສານ

ສະແດງອອກໃຫ້ເຫັນໃນ 2 ດ້ານດັ່ງນີ້[3]:

- **ຄວາມສຳຄັນທາງດ້ານການເມືອງ-ການປົກຄອງ.**

ພວກເຮົາຕ້ອງຮັບຮູ້ເຂົ້າໃຈແຈ້ງວ່າການປະຕິບັດຄຳຕັດສິນຂອງສານແມ່ນການຕໍ່ສູ້ລະຫວ່າງອັນຜິດກົດໝາຍກັບອັນຖືກກົດໝາຍ, ອັນຊອບທຳກັບອັນບໍ່ຊອບທຳ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະ ພົນລະເມືອງ ຊຶ່ງເນື້ອແທ້ຂອງການປະຕິບັດຄຳຕັດສິນຂອງສານແມ່ນການປະຕິບັດນະໂຍບາຍ

---
[3] ບົດຂອງທ່ານ ບຸນທາ ຊິງເຢີທ່າວ, ຮອງລັດຖະມົນຕີກະຊວງຍຸຕິທຳ

ຍຸຕິທຳ ຫຼື ນະໂຍບາຍຄວາມສະເໝີພາບຕໍ່ໜ້າກົດໝາຍຂອງພັກ, ສະນັ້ນ "ຜູ້ໃດໄດ້ກະທຳຜິດ, ຜູ້ນັ້ນກໍຕ້ອງໄດ້ຮັບການລົງໂທດຕາມກົດໝາຍຢ່າງເຂັ້ມງວດ, ຜູ້ໃດບໍ່ໄດ້ກະທຳຜິດແມ່ນເດັດຂາດບໍ່ໄດ້ຮັບການລົງໂທດ", ບຸກຄົນ ແລະ ການຈັດຕັ້ງຕ້ອງຢູ່ໃຕ້ລັດຖະທຳມະນູນ ແລະ ກົດໝາຍ, ໝາຍຄວາມວ່າ: ທຸກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກຄົນ ແລະ ທຸກອົງການຈັດຕັ້ງຕ້ອງເຄົາລົບ ແລະ ປະຕິບັດຢ່າງເຂັ້ມງວດ.

ການປະຕິບັດຄຳຕັດສິນຂອງສານ ໄດ້ດີມັນສະແດງເຖິງລັກສະນະດີເລີດຂອງລະບອບການປົກຄອງປະເທດຊາດພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງພັກປະຊາຊົນປະຕິວັດລາວ, ແມ່ນການປະຕິບັດແນວທາງຍຸຕິທຳອັນຖືກຕ້ອງຂອງພັກ, ສະແດງເຖິງຄວາມເຂັ້ມແຂງຂອງອຳນາດບໍລິຫານແຫ່ງລັດ. ຍ້ອນແນວນັ້ນ, ຄະນະພັກ, ອົງການປົກຄອງທຸກຂັ້ນ, ທຸກໜ່ວຍພັກ ແລະ ສະມາຊິກພັກທຸກສະຫາຍຈະຕ້ອງເອົາໃຈໃສ່ເພີ່ມທະວີການຊີ້ນຳ-ນຳພາພະນັກງານທີ່ສັງກັດກົມກອງ, ຫ້ອງການ ແລະ ໜ່ວຍງານຂອງຕົນ, ເພີ່ມທະວີຄວາມເອົາໃຈໃສ່ໃຫ້ຄວາມຮ່ວມມືທັງອຳນວຍຄວາມສະດວກດ້ານຕ່າງໆ ພ້ອມທັງໃຫ້ການສະໜັບສະໜູນເຂົ້າຮ່ວມໃນການປະຕິບັດ ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານ ມີຄວາມເປັນເອກະພາບ, ວ່ອງໄວ, ຖືກຕ້ອງ, ເຂັ້ມງວດ ແລະ ມີປະສິດທິຜົນສູງ, ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສາມັກຄີປອງດອງ, ຍຸຕິທຳແລະ ສີວິໄລ.

- **ຄວາມສຳຄັນທາງດ້ານເສດຖະກິດ-ສັງຄົມ.**

ການປະຕິບັດຄຳຕັດສິນຂອງສານ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະ ພົວພັນກັບການພັດທະນາເສດຖະກິດ, ມັນແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ. ສະນັ້ນ, ຖ້າຫາກວ່າການປະຕິບັດຄຳຕັດສິນຂອງສານມີການເຄື່ອນໄຫວ ແລະ ໄດ້ຮັບການປະຕິບັດໄດ້ດີສາມາດທວງເອົາສິດ ແລະ ຜົນປະ ໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນທີ່ຖືກລະເມີດນັ້ນຄືນມາແນ່ນອນວ່າມັນກໍຈະສົ່ງຜົນດີໃຫ້ແກ່ການສ້າງລັດປະຊາທິ ປະໄຕປະຊາຊົນໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບສູງ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ບັນດາຊົນຊັ້ນຄົນ, ພົນລະເມືອງ ແລະນັກລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນ, ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາປະເທດຊາດ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວເປັນລະບົບຕໍ່ເນື່ອງ, ສາມາດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໄດ້ເທື່ອລະກ້າວ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບ, ຍຸຕິທຳ ແລະ ສີວິໄລ. ກົງກັນຂ້າມ, ເຖິງແມ່ນວ່າລັດໄດ້ອອກແຮງສ້າງ ແລະ ປັບປຸງກົດໝາຍ, ເອົາໃຈໃສ່ໂຄສະນາເຜີຍແຜ່ສ້າງສະຕິເຄົາລົບກົດໝາຍໄດ້ຢ່າງກວ້າງຂວາງ, ແຕ່ການປະຕິບັດຄຳຕັດສິນຂອງສານ ຊໍ້າພັດມີຄວາມອ່ອນແອ, ບໍ່ສາມາດນຳເອົາຄຳສັ່ງ, ຄຳຊີ້ຂາດ, ຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດນັ້ນມາຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳຕາມກົດໝາຍໄດ້ ກໍຈະສົ່ງຜົນສະທ້ອນເຖິງການຄຸ້ມຄອງຂອງລັດດ້ວຍກົດໝາຍ, ເປັນການກີດໜ່ວງຖ່ວງດຶງການພັດທະນາເສດຖະກິດ, ເຮັດໃຫ້ຈັງວະການຂະຫຍາຍຕົວທາງດ້ານເສດຖະກິດມີຄວາມຊັກຊ້າ, ເກີດມີຫຼາຍປະກົດການຫຍໍ້ທໍ້ໃນສັງຄົມເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນຕໍ່ບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດໃນການບໍລິຫານປະເທດ.

ການປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນທາງດ້ານສັງຄົມສະແດງອອກຢູ່ບ່ອນວ່າຖ້າຫາກການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານ ດຳເນີນໄປໄດ້ດີກໍຈະສົ່ງຜົນດີ ໃນການສ້າງລັດປະຊາທິປະໄຕປະຊາຊົນ ມີຄວາມເຂັ້ມແຂງ, ມີປະສິດທິພາບ ແລະ ສ້າງຄວາມເຊື່ອໝັ້ນໃຫ້ພົນລະເມືອງຕໍ່ການຄຸ້ມຄອງລັດດ້ວຍກົດໝາຍ; ສະກັດກັ້ນປະກົດການລະ ເມີດ

ກົດໝາຍເຮັດໃຫ້ການປະຕິບັດກົດໝາຍກໍຄືປະຕິບັດຄຳຕັດສິນຂອງສານມີຄວາມເຂັ້ມງວດວ່ອງໄວ ແລະ ມີຄວາມເປັນເອກະພາບໃນທົ່ວປະເທດ, ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ. ກົງກັນຂ້າມ, ຖ້າຫາກການປະຕິບັດຄຳຕັດສິນຂອງສານ ບໍ່ໄດ້ຮັບການຮ່ວມມືສະໜັບສະໜູນ ແລະ ຈັດຕັ້ງປະຕິບັດ ກໍຈະເຮັດໃຫ້ຄຳຕັດສິນ, ຄຳພິພາກສາຂອງສານ ບໍ່ມີຄວາມໝາຍແຕ່ຢ່າງໃດ ແລະ ອາດຈະສົ່ງຜົນສະທ້ອນອັນບໍ່ດີເຊັ່ນ: ສານບໍ່ຍຸຕິທຳ, ກົດໝາຍບໍ່ສັກສິດ, ອຳນາດລັດບໍ່ເຂັ້ມແຂງ, ປະຊາຊົນບໍ່ໄດ້ຮັບຄວາມຍຸຕິທຳ ແລະ ອື່ນໆ.

ການປະຕິບັດຄຳຕັດສິນຂອງສານ ແມ່ນການສະແດງອອກເຖິງຄວາມສັກສິດ ແລະ ຄວາມເຂັ້ມແຂງຂອງອຳນາດລັດພວກເຮົາ ທີ່ເປັນອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ. ສະນັ້ນ, ໃນການປະຕິບັດຄຳຕັດສິນຂອງສານ ແມ່ນມີຄວາມສຳຄັນຫຼາຍ ເພື່ອເຮັດໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆ ນັ້ນໃຫ້ໄດ້ຮັບການປະຕິບັດໃຫ້ປາກົດຜົນເປັນຈິງ ຢ່າງຖືກຕ້ອງ, ເປັນທຳ, ວ່ອງໄວ ແລະ ເຂັ້ມງວດ, ທັງເປັນການເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ, ປົກປ້ອງສິດ, ຜົນປະໂຫຍດ ຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບ ຮຽບຮ້ອຍ ແລະ ມີຄວາມຍຸຕິທຳ. ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຕ້ອງມີທັດສະນະອັນຖືກຕ້ອງກັບທາດແທ້ຊົນຊັ້ນຂອງລັດເຮົາ, ຕ້ອງມີຄວາມນົບນອບ, ຄ່ອງແຄ້ວ, ແຕ່ໜັກແໜ້ນ, ເຂັ້ມງວດ ແລະ ເດັດຂາດ ຮູ້ປຸກລະດົມ, ສຶກສາອົບຮົມປະ ຊາຊົນເຂົ້າຮ່ວມຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ໄດ້ດີ, ເປັນເອກະພາບສູງ, ຮັບປະ ກັນສິດ ແລະ ຜົນປະໂຫຍດຊອບທຳຂອງລັດ, ລວມໝູ່ ແລະ ພົນລະເມືອງ ຢ່າງແທ້ຈິງ, ຕ້ອງຫຼີກເວັ້ນທ່າທີອ່ຽງຊ້າຍ, ອ່ຽງຂວາ ໃນເວລາຈັດຕັ້ງປະຕິບັດຕົວຈິງ.

ການທີ່ຈະນຳເອົາຄຳຕັດສິນຂອງສານໃດໜຶ່ງມາຈັດຕັ້ງປະຕິບັດ ກ່ອນອື່ນໝົດຕ້ອງເຂົ້າໃຈຄວາມໝາຍຄວາມສຳຄັນ ແລະ ຄວາມສັກສິດ ຂອງຄຳຕັດສິນຂອງສານ.

ສະແດງວ່າ ເມື່ອມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ແມ່ນມີຜົນສັກສິດ, ມີຄຸນຄ່າທາງກົດໝາຍ ແລະມີຄວາມຈຳເປັນທີ່ຕ້ອງນຳໄປຈັດຕັ້ງປະຕິບັດ, ການປະຕິບັດຄຳຕັດສິນຂອງສານ ຈຶ່ງເປັນວຽກງານທີ່ສຳຄັນຄື ການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆ ທີ່ກຳນົດໄວ້ໃນກົດໝາຍມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ, ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດ ຫຼື ສູນຫາຍໄປ, ບັນຫາດັ່ງກ່າວໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ຖ້າວ່າຄຳຕັດສິນຂອງສານຫາກໄດ້ຮັບການປະຕິບັດຢ່າງຖືກຕ້ອງເປັນທຳ ແລະ ທັນກັບເວລາກໍຈະຍົກບົດບາດຄວາມສຳຄັນຂອງຂົງເຂດຍຸຕິທຳຂຶ້ນຕື່ມ, ທັງເປັນການເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ອຳນາດລັດ, ປະຊາຊົນກໍ່ຈະໃຫ້ຄວາມເຄົາລົບນັບຖືທັງເຊື່ອໝັ້ນ ແລະ ໄວ້ວາງໃຈຕໍ່ແນວທາງນະໂຍບາຍອັນຖືກຕ້ອງເປັນທຳຂອງພັກເຊັ່ນດຽວກັນ.

**3. ຈຸດປະສົງຂອງການປະຕິບັດຄຳຕັດສິນຂອງສານ**

ເພື່ອສ້າງຄວາມຮັບຮູ້ເຂົ້າໃຈເປັນເອກະພາບຕໍ່ວຽກງານການປະຕິບັດຄໍາຕັດສິນຂອງສານ, ຍົກສູງບົດບາດຂອງອົງການປະຕິບັດຄໍາຕັດສິນຂອງສານເພື່ອຮັບປະກັນໃຫ້ຄໍາຕັດສິນຂອງສານໄດ້ຮັບການປະຕິບັດຢ່າງເຂັ້ງວດ.

ເພື່ອເຮັດໃຫ້ຄໍາຕັດສິນຂອງສານໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງວ່ອງໄວ ແລະ ເປັນເອກະພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອໍານາດລັດ ແລະ ຂອງກົດໝາຍ; ປົກປ້ອງສິດຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທໍາຂອງລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍແລະມີຄວາມຍຸຕິທໍາ; ເພື່ອຟື້ນຟູສິດຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ທີ່ຖືກລະເມີດຫຼືສູນເສຍໄປ.

ຈຸດປະສົງຂອງວຽກງານນີ້ ແມ່ນເຮັດແນວໃດເພື່ອສ້າງສະຕິເຄົາລົບກົດໝາຍ, ສ້າງຄວາມເຂົ້າໃຈ ແລະ ເພື່ອສ້າງຄວາມເປັນເອກະພາບໃຫ້ເປັນອັນໜຶ່ງອັນດຽວກັນທາງດ້ານທັດສະນະ ແລະ ພາກປະຕິບັດຕົວຈິງຢູ່ແຕ່ລະທ້ອງຖິ່ນລະຫວ່າງອົງການຄຸ້ມຄອງ ແລະ ອົງການປະຕິບັດຄໍາຕັດສິນຂອງສານກັບພາກສ່ວນກ່ຽວຂ້ອງ ກໍຄືຄະນະປະ ສານງານປົກປ້ອງຂັ້ນຕ່າງໆ ກ່ຽວກັບການດໍາເນີນຄະດີຕາມຂະບວນການຍຸຕິທໍາ; ແນໃສ່ແກ້ໄຂບັນຫາທີ່ຄົງຄ້າງ, ທາງສຽງຈົ່ມວ່າຂອງສັງຄົມຕໍ່ການປະຕິບັດຄໍາຕັດສິນຂອງສານ, ສ້າງຄວາມເຊື່ອໝັ້ນ ແລະ ຄວາມເພິ່ງພໍໃຈຂອງສັງຄົມຕໍ່ການຈັດ ຕັ້ງປະຕິບັດຄໍາຕັດສິນຂອງສານ.

**4. ຫຼັກການປະຕິບັດຄໍາຕັດສິນຂອງສານ**

ຫຼັກການໃນການປະຕິບັດຄໍາຕັດສິນຂອງສານ ມີ 6 ຫຼັກການ ດັ່ງນີ້[4]:

ການປະຕິບັດຕາມຫລັກການໃຫ້ເປັນໄປຕາມຂັ້ນຕອນຂອງກົດໝາຍມີຄວາມສໍາຄັນ, ສະນັ້ນຫຼັກການທໍາອິດຄື:

**1) ຫຼັກການປະຕິບັດຖືກຕ້ອງຕາມກົດໝາຍ, ຄໍາຕັດສິນຂອງສານ ແລະ ຄວາມເປັນຈິງ**ໝາຍຄວາມວ່າພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນຄໍາຕັດສິນຂອງສານ ແລະ ຄໍາຕັດສິນນັ້ນຕ້ອງເປັນຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ.

ນອກຈາກນັ້ນພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານຕ້ອງຮູ້ ແລະ ເຂົ້າໃຈວ່າ ຄໍາຕັດສິນຂອງສານສະບັບໃດເປັນຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ, ຢູ່ໃນຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດນັ້ນມີຈຸດໃດທີ່ສໍາຄັນກ່ວາໝູ່ ແລະ ມີເນື້ອໃນແນວໃດທີ່ນໍາມາຈັດຕັ້ງປະຕິບັດ, ເນື່ອງຈາກວ່າຄໍາຕັດສິນແຕ່ລະສະບັບກໍມີຫລາຍໜ້າ, ແຕ່ລະໜ້າກໍມີຄວາມສໍາຄັນ ເປັນຕ່ອງໂສ້ກ່ຽວພັນ ແລະ ສອດຄ່ອງກັນໃນແຕ່ລະພາກ, ແຕ່ສໍາຄັນທີ່ສຸດແມ່ນພາກສຸດທ້າຍ ຊຶ່ງເອີ້ນກັນວ່າພາກຕັດສິນ ພາກດັ່ງກ່າວໄດ້ກໍານົດເນື້ອໃນຈິດໃຈຄໍາຕັດສິນໄວ້ຄົບຖ້ວນ ຈະແຈ້ງ. ໃນບາງຄໍາຕັດສິນພາກດັ່ງກ່າວກໍບໍ່ໄດ້ກໍານົດໄວ້ທັງໝົດເນື່ອງຈາກເປັນຄໍາອະທິບາຍຍາວ.

ການປະຕິບັດຄໍາຕັດສິນຂອງສານ ທີ່ຖືກຕ້ອງຕາມເນື້ອໃນຈິດໃຈຂອງຄໍາຕັດສິນໄດ້ກໍານົດໄວ້ລັກແນ່ນັ້ນ ແມ່ນເປັນບ່ອນອີງທີ່ໜັກແໜ້ນໃຫ້ແກ່ພະນັກງານພວກເຮົາໃນການປະຕິບັດໜ້າທີ່ ແລະ ຫລີກເວັ້ນຈາກທາງສຽງສັງຄົມບໍ່ດີທີ່ຈະກະທົບໃສ່ພະນັກງານທີ່ປະຕິບັດໜ້າທີ່ຕົວຈິງໄດ້ໃນລະດັບທີ່ແນ່ນອນ.

**2) ຫຼັກການປະຕິບັດດ້ວຍຄວາມສະໝັກໃຈ**

[4] ມາດຕາ 5 ກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

ການປະຕິບັດດ້ວຍຄວາມສະໝັກໃຈ ແມ່ນ ການຕົກລົງຂອງຄູ່ຄວາມໃນການປະຕິບັດ ຫຼື ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຊຶ່ງການຕົກລົງນັ້ນ ຕ້ອງບໍ່ຂັດກັບກົດໝາຍ ແລະ ບໍ່ສ້າງຄວາມອັບປະໂຫຍດໃຫ້ແກ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

**3) ຫຼັກການສະເໝີພາບ:**

ທຸກໆຄຳຕັດສິນຂອງສານທີ່ຖືກສັ່ງໃຫ້ອີງການປະຕິບັດຄຳຕັດສິນຂອງສານ ແລະ ເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ຕ້ອງເຂົ້າໃຈວ່າ ທກຸໆຄຳຕັດສິນສິນຂອງສານມີຄວາມສຳຄັນ ແລະ ມີຄວາມສະເໝີພາບກັນໃນການປະຕິບັດໂດຍບໍ່ຂຶ້ນກັບຄວາມຍາກ ຫຼື ງ່າຍ, ບໍ່ຂຶ້ນກັບມູນຄ່າໃນຄຳຕັດສິນຫລາຍຫຼືໜ້ອຍ, ບໍ່ຂຶ້ນກັບວ່າເປັນຄະດີທີ່ພົວພັນກັບພົນລະເມືອງລາວ ຫຼື ຕ່າງປະເທດ, ຫລັກການສະເໝີພາບໃນການປະຕິບັດຄຳຕັດສິນຂອງສານນີ້ຄ້າຍຄືກັບຫລັກການສະເໝີພາບໃນການດຳເນີນຄະດີຢູ່ສານ ໝາຍຄວາມວ່າ ການປະຕິບັດຄຳຕັດສິນຂອງສານ ກໍຕ້ອງປະຕິບັດບົນພື້ນຖານແຫ່ງຄວາມສະເໝີພາບ ຂອງພົນລະເມືອງທຸກຄົນ ຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ. ພ້ອມນັ້ນກໍຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງ ໂດຍສະເພາະຄູ່ຄວາມ ໃນຄຳຕັດສິນຂອງສານໄດ້ປະຕິບັດສິດສະເໝີພາບຕາມທີ່ກົດໝາຍ ແລະ ລັດຖະທຳມະນູນໄດ້ກຳນົດໄວ້,ເພື່ອຮັບປະກັນໃຫ້ການປະຕິບັດຄຳຕັດສິນຂອງສານ ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ພາວະວິໄສ.

**4) ຫຼັກການສຶກສາອົບຮົມ:**

ແມ່ນການປຸກລະດົມໃຫ້ທຸກຄົນທີ່ເຂົ້າຮ່ວມໄດ້ເຂົ້າໃຈ ຕື່ນຕົວປະຕິບັດ ຫຼື ສຶກສາອົບຮົມໃຫ້ຮູ້ຜິດຮູ້ຖືກ ຫຼື ສາມາດຈຳແນກມິດ-ສັດຕູໄດ້ຢ່າງຈະແຈ້ງ, ສຶກສາອົບຮົມພົນລະເມືອງໃຫ້ມີສະຕິເຄົາລົບກົດໝາຍ ແລະ ປະຕິບັດພັນທະຂອງຕົນຕາມລະບຽບການທີ່ໄດ້ກຳນົດໄວ້, ການສຶກສາອົບຮົມໃຫ້ຄູ່ຄວາມ ແລະ ພາກສ່ວນກ່ຽວຂ້ອງເຂົ້າໃຈເປັນບັນຫາທີ່ຍາກທີ່ສຸດ, ການສຶກສາອົບຮົມຄູ່ຄວາມໃນຄະດີ, ບຸກຄົນທີ່ເຂົ້າຮ່ວມຕະຫລອດເຖິງພາກສ່ວນທີ່ມີສ່ວນກ່ຽວຂ້ອງກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ຕ້ອງຕິດພັນກັບລະບຽບຫລັກການ, ຕິດພັນກັບຕົວຈິງຢ່າງສົມເຫດສົມຜົນ, ການສຶກສາອົບຮົມຕ້ອງເຮັດທຸກໆຄະດີເຮັດທຸກຂັ້ນຕອນຂອງການປະຕິບັດ, ເຮັດຢ່າງເນື່ອງນິດລຽນຕິດ, ເຮັດຫລາຍຫຼົບຫລາຍຕ່າວ ສົມທົບກັບຮູບການ ແລະ ວິທີການທີ່ສອດຄ່ອງກັບແຕ່ລະເປົ້າໝາຍ, ເພດ ໄວ ແລະ ກາລະເວລາ ການສຶກສາອົບຮົມນີ້ ຕ້ອງມີການຊີ້ນຳ-ນຳພາຢ່າງໃກ້ສິດ ເພື່ອຮັບປະກັນຄວາມຄ່ອງແຄ້ວວ່ອງໄວ ບວກກັບຄວາມນຶ້ມນວນ, ແໜຼມຄົມ ແລະ ເດັດຂາດ.

**5) ຫລັກການ ເຂັ້ມງວດ, ເດັດຂາດ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ:**

ຫຼັກການເຂັ້ມງວດ, ເດັດຂາດ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ແມ່ນມາດຕະການປະຕິບັດຂອງພະນັກງານປະຕິບັດຄຳຕັດສິນຂອງສານຕໍ່ກັບຄູ່ຄວາມ, ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໂດຍນຳໃຊ້ຄວາມຮູ້ ຄວາມສາມາດທີ່ໄດ້ຮຽນມາ ແລະ ຈາກປະສົບການນັ້ນ ພະນັກງານຈັດຕັ້ງປະຕິບັດບໍ່ຄວນລໍຖ້າຟັງແຕ່ຄຳສັ່ງຂອງຂັ້ນເທິງ ໂດຍບໍ່ມີຫົວຄິດປະດິດສ້າງ ບໍ່ມີຄວາມກ້າຫານ ເຮັດໄປຢ່າງບໍ່ມີຄວາມຮັບຜິດຊອບ, ການປະຕິບັດຄຳຕັດສິນບໍ່ວ່ອງໄວ, ຊັກຊ້າ, ລໍຖ້າຜົນປະໂຫຍດທີ່ຈະຕອບແທນຈຶ່ງປະຕິບັດ, ຫຼື ບໍ່ມີວິທີຈະສືບຕໍ່ປະຕິບັດແຕ່ກໍບໍ່ໄດ້ປຶກສາຫາລືນຳໝູ່ຄະນະ, ບໍ່ໄດ້ລາຍງານໃຫ້ຂັ້ນເທິງຊາບ ຫຼື ອາດຈະກວມລວມເຖິງຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ.

“ຄວາມໂປ່ງໃສ ແລະ ຍຸຕິທຳ ໃນການປະຕິບັດຄຳຕັດສິນຂອງສານ ຍັງໝາຍເຖິງການເປີດເຜີຍ ການຊີ້ແຈງເຖິງການດຳເນີນງານ ຫຼື ການແກ້ໄຂ ແລະ ຜົນການປະຕິບັດງານຂອງການປະຕິບັດຄຳຕັດ ສິນຂອງສານ ໃຫ້ແກ່ມະຫາຊົນໄດ້ຮູ້ ໄດ້ເຫັນ ແລະ ເຂົ້າໃຈ, ໝາຍຄວາມວ່າບໍ່ປິດບັງ, ເຊື່ອງອຳ, ເຮັດດ້ວຍຄວາມບໍລິສຸດໃຈ, ຮັບປະກັນ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງທຸກຝ່າຍ”[5].

**6) ຫລັກການປະສານສົມທົບ:**

ແມ່ນເຮັດແນວໃດເພື່ອສ້າງສະຕິເຄົາລົບກົດໝາຍ, ສ້າງຄວາມເຂົ້າໃຈແລະ ເພື່ອສ້າງຄວາມເປັນເອກະພາບໃຫ້ເປັນອັນໜຶ່ງອັນດຽວກັນທາງດ້ານທັດສະນະແລະ ພາກປະຕິບັດຕົວຈິງຢູ່ ແຕ່ລະທ້ອງຖິ່ນ. ການກຳນົດຫລັກການໃນການປະສານສົມທົບນີ້ກໍເພື່ອໃຫ້ທຸກຝ່າຍເຂົ້າໃຈໃນທິດທາງດຽວກັນ ໃຫ້ມັນສອດຄ່ອງ ກົມກຽວ ແລະ ເພື່ອເຮັດໃຫ້ທຸກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆ ນັ້ນໃຫ້ໄດ້ຮັບການປະຕິບັດ ທັງເປັນການເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍໃນການປົກປ້ອງສິດ,ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງລວມໝູ່ແລະຂອງພົນລະເມືອງ,ເຮັດໃຫ້ສັງຄົມມີຄວາມສະຫງົບ,ຄວາມເປັນລະບຽບຮຽບຮ້ອຍແລະມີຄວາມຍຸຕິທຳ ແລະ ເພື່ອສ້າງຄວາມສາມັກຄີ ເປັນເອກະພາບໃຫ້ນັບມື້ນັບໜັກແໜ້ນເຂັ້ມແຂງ ແລະ ວ່ອງໄວ.

## References:


1. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
3. ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020.
4. ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂຽນ ແລະ ສັງລວມ ໂດຍ ປທ ບຸນຕາ ສ.ພາບມີໄຊ;


[5] ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂຽນ ແລະ ສັງລວມ ໂດຍ ປທ ບຸນຕາ ສ.ພາບມີໄຊ ໜ້າ 16